ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 2479 /ກງ

ວັນທີ, ..30.. ກໍລະກົດ ..2018

# <u>ແຈ້ງການ</u>

*ເຖິງ* : ບັນດາດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

*ເລື່ອງ* : ການອຳນວຍຄວາມສະດວກເຄື່ອງຂອງຈາກຕ່າງປະເທດ ຂອງບຸກຄົນ, ນິຕິ ບຸກຄົນ ທີ່ນຳເຂົ້າມາຊ່ວຍເຫລືອບັນເທົາທຸກ ຜູ້ທີ່ໄດ້ຮັບຜົນກະທົບຈາກນ້ຳຖ້ວມ ໃນເຂດປະສົບໄພພິບັດສຸກເສີນ ລະດັບຊາດ.

- ອີງຕາມກົດໝາຍພາສີ ສະບັບເລກທີ 04/ສພຊ ລົງວັນທີ 21/11/20011.
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ ລົງວັນທີ 8.05/2017 ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວກະຊວງການເງິນ.
- ອີງຕາມຂໍ້ຕົກລົງນາຍົກລັດຖະມົນຕີ ສະບັບເລກທີ 47/ນຍ ລົງວັນທີ 25/07/2018 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການສະເພາະກິດແກ້ໄຂໄພພິບັດ ລະດັບຊາດ.
- ອີງຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1105/ຫສນຍ ລົງວັນທີ 24/07/2018.

ເພື່ອຮັບປະກັນ ການນຳເຂົ້າເຄື່ອງຂອງຈາກຕ່າງປະເທດຂອງບຸກຄົນ, ນິຕິບຸກຄົນ ເພື່ອນຳມາຊ່ວຍເຫລືອ ບັນເທົາທຸກປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກເຫດການໄພນ້ຳຖ້ວມ ທີ່ເມືອງສະໜາມໄຊ, ແຂວງອັດຕະປື, ເປັນຕົ້ນ : ເຄື່ອງອຸປະໂພກບໍລິໂພກ, ຢາປົວພະຍາດ, ເຄື່ອງມືການແພດ, ອຸປະກອນກູ້ໄພຕ່າງໆ ລວມທັງ ພາຫະນະທີ່ບັນທຸກເຄື່ອງຂອງຊ່ວຍເຫລືອ ແລະ ບຸກຄົນຜູ້ຕິດຕາມ ແມ່ນໄດ້ຮັບການຍົກເວັ້ນຄ່າພາສີ-ອາກອນແລະຄ່າທຳນຽມ ຕາມທີ່ໄດ້ກຳນົດໃນມາດຕາ 56 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ ລົງວັນທີ 21/11/2011 ບົນເງື່ອນໄຂການສະເໜີ ແລະຢັ້ງຢືນຂອງພາກສ່ວນລັດທີ່ກ່ຽວຂ້ອງ, ແລະ ເພື່ອໃຫ້ໄດ້ຮັບຄວາມຄວາມສະດວກ ແລະ ວ່ອງໄວ ໂດຍສະເພາະໃນຂອດການນຳເຂົ້າເຄື່ອງຂອງຊ່ວຍເຫລືອ ຜ່ານບັນດາດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກແຈ້ງການ, ຄື :**

1. ພາກສ່ວນລັດທີ່ກ່ຽວຂ້ອງ ໃນການສະເໜີຂໍຍົກເວັ້ນພາສີແລະພັນທະອື່ນ ເຄື່ອງຂອງນຳເຂົ້າມາຊ່ວຍເຫລືອດັ່ງກ່າວ, ຂັ້ນສູນກາງ ແມ່ນກະຊວງແຮງງານແລະສະຫວັດດີການແລະສັງຄົມ, ຂັ້ນທ້ອງຖິ່ນ ແມ່ນຫ້ອງວ່າການປົກຄອງແຂວງ

ແລະ ໃຫ້ພາກສ່ວນກ່ຽວຂ້ອງດັ່ງກ່າວ ປະສານກັບດ່ານຊາຍແດນບ່ອນສິນຄ້ານຳເຂົ້າ ເພື່ອແຈ້ງຂໍ້ມູນລາຍການເຄື່ອງຂອງທີ່ນຳເຂົ້າມາ ໃຫ້ເຈົ້າໜ້າທີ່ປະຈຳດ່ານຊາບ ເພື່ອອຳນວຍຄວາມສະດວກ ເປັນແຕ່ລະກໍລະນີ.

2. ມອບໃຫ້ກົມພາສີ ຕິດຕາມ, ກວດກາ ແລະ ໃຫ້ຄຳແນະນຳບັນດາດ່ານພາສີຊາຍແດນ ບ່ອນນຳເຂົ້າເຄື່ອງຂອງຊ່ວຍເຫລືອດັ່ງກ່າວ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ສັງລວມສະພາບລາຍງານໃຫ້ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງຊາບເປັນແຕ່ລະໄລຍະ.

- ມອບໃຫ້ຫ້ອງການກະຊວງການເງິນ, ບັນດາກົມອ້ອມຂ້າງກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງທັງສູນກາງແລະທ້ອງຖິ່ນ ປະສານສົມທົບກັນ ເພື່ອພ້ອມກັນຈັດຕັ້ງຄຸ້ມຄອງແລະອຳນວຍຄວາມສະດວກ ການນຳເຂົ້າເຄື່ອງຂອງຊ່ວຍເຫລືອດັ່ງກ່າວ ໃຫ້ສອດຄ່ອງກັບກົດໝາຍແລະລະບຽບການກຳນົດໄວ້.

3. ມອບໃຫ້ລັດຖະການພາສີ ປະຈຳດ່ານພາສີຊາຍແດນ ແລະ ດ່ານພາສີສະໜາມບິນສາກົນ ຈັດຕັ້ງປະຕິບັດ, ຄື :

- ປະກອບເອກະສານໃບແຈ້ງພາສີ ນຳເຂົ້າຍົກເວັ້ນເຄື່ອງຂອງຊ່ວຍເຫລືອດັ່ງກ່າວ ທີ່ດ່ານບ່ອນເຄື່ອງຂອງນຳເຂົ້າ. ໃນກໍລະນີ ຫາກບໍ່ມີການເອກະສານຢັ້ງຢືນຈາກພາກສ່ວນລັດທີ່ກ່ຽວຂ້ອງ ໃຫ້ອະນຸຍາດເຄື່ອງຂອງນຳເຂົ້າມາກ່ອນແລ້ວຈຶ່ງໃຫ້ນຳເອກະສານໃບຢັ້ງຢືນຂອງພາກສ່ວນກ່ຽວຂ້ອງ ມອບໃຫ້ດ່ານພາສີ ພາຍໃນກຳນົດເວລາ 15 ວັນລັດຖະການ ນັບແຕ່ມື້ເຄື່ອງຂອງອອກຈາກດ່ານພາສີ.

- ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນດ່ານ ກວດກາເຄື່ອງຂອງນຳເຂົ້າຊ່ວຍເຫລືອດັ່ງກ່າວ ໃຫ້ມີສະດວກວ່ອງໄວ ແລະ ຖືກຕ້ອງ ໂດຍນຳໃຊ້ເຄື່ອງມືທັນສະໄໝ(ຖ້າມີ) ເພື່ອຮັບປະກັນຄວາມປອດໄພ ແລະ ຫລີກເວັ້ນການນຳເຂົ້າສິ່ງຜິດກົດໝາຍ ລວມເຖິງ ຢາປົວພະຍາດ, ເຄື່ອງອຸປະໂພກບໍລິໂພກ ທີ່ເສຍຄຸນ ຫລື ໝົດອາຍຸການນຳໃຊ້ ແລະ ອື່ນໆ.

- ປະສານສົມທົບກັບພາກສ່ວນລັດທີ່ກ່ຽວຂ້ອງ ເພື່ອໃຫ້ຄຳແນະນຳໃນການດຳເນີນຂັ້ນຕອນ ຜ່ານດ່ານຊາຍແດນ, ພ້ອມນັ້ນ ກໍ່ໃຫ້ປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງ ທີ່ແຂວງປາຍທາງ ເພື່ອຮັບປະກັນໃຫ້ເຄື່ອງຂອງຊ່ວຍເຫລືອດັ່ງກ່າວ ເຄື່ອນຍ້າຍຮອດປາຍທາງ ຕາມເປົ້າໝາຍ.

- ໃຫ້ສັງລວມສະຖິຕິຂໍ້ມູນການນຳເຂົ້າເຄື່ອງຂອງຊ່ວຍເຫລືອທີ່ນຳເຂົ້າຍົກເວັ້ນ ເພື່ອລາຍງານໃຫ້ກົມພາສີ, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຊາບເປັນແຕ່ລະໄລຍະ.

- ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານຫົວໜ້າກົມພາສີ ໃນທັນທີ ເພື່ອແກ້ໄຂໃຫ້ທັນກັບສະພາບການ.

4. ມາດຕະການ ທີ່ໄດ້ກຳນົດໃນແຈ້ງການສະບັບນີ້ ເພື່ອແກ້ໄຂການນຳເຂົ້າເຄື່ອງຊ່ວຍເຫລືອດ້ານມະນຸດສະທຳ ຮັບໃຊ້ເຫດການອຸທົກກະໄພ ທີ່ເມືອງສະໜາມໄຊ, ແຂວງອັດຕະປື ໃຫ້ມີຂັ້ນຕອນກະທັດລັດ ແລະ ມີຄວາມໄລ່ງລ່ຽນ, ຊຶ່ງມີຜົນບັງຄັບໃຊ້ ພາຍໃນກຳນົດ 60 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຖ້າກາຍກຳນົດເວລາດັ່ງກ່າວ ແມ່ນໃຫ້ປະຕິບັດຕາມລະບຽບຂັ້ນຕອນ ທີ່ກົດໝາຍໄດ້ກຳນົດໄວ້.

ສ່ວນການນຳເຄື່ອງຂອງຊ່ວຍເຫລືອອື່ນໆ ທີ່ບໍ່ບອນໃນກໍລະນີດັ່ງກ່າວນີ້ ແມ່ນໃຫ້ປະຕິບັດຕາມລະບຽບຂັ້ນຕອນ ທີ່ກົດໝາຍໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ

ບ່ອນສົ່ງ :

- ທ່ານນາຍົກ, ຮອງນາຍົກລັດຖະມົນຕີ — 01 ສະບັບ "ເພື່ອຊາບ"
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — 01 ສະບັບ"ເພື່ອຊາບ"
- ກະຊວງແຮງງານແລະສະຫວັດດີການສັງຄົມ — 01 ສະບັບ"ເພື່ອຊາບ"
- ກະຊວງອຸດສາຫະກຳແລະການຄ້າ — 01 ສະບັບ"ເພື່ອຊາບ"
- ຫ້ອງວ່າການປົກຄອງແຂວງທີ່ກ່ຽວຂ້ອງ — 01 ສະບັບ"ເພື່ອຊາບ"
- ກົມພາສີ — 01 ສະບັບ"ເພື່ອຈັດຕັ້ງປະຕິບັດ"
- ບັນດາກົມອ້ອມຂ້າງກະຊວງການເງິນ — 01ສະບັບ"ເພື່ອປະສານສົມທົບ"
- ສຳເນົາ — 01 ສະບັບ